ໂຄງການເຄືອຂ່າຍຂໍ້ມູນທີ່ດິນ
ແລະ ຊັບພະຍາກອນທຳມະຊາດ

# ຊີວິດໃໝ່




ຂຽນໂດຍ: ຄຳຫລ້າ ເພື້ອງມະນີວົງ


*ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.*


http://www.rightslinklao.org

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

ໂຄງການ ເຄືອຂ່າຍຂໍ້ມູນ ທີ່ດິນ

# Rights-LINK

ບ້ານ ໂພນສະຫວັນໃຕ້, ໜ່ວຍ 14, ເຮືອນເລກທີ 207
ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 (0)21 312519
ແຟກ: +856 (0)21 315841

ອົງການບ້ານຈຸດສຸມສາກົນ (VFI)

ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA)

ສະໜັບສະໜູນທຶນໂດຍ:

ອົງການເພື່ອການພັດທະນາ ແລະ ການຮ່ວມມື ແຫ່ງປະເທດສະວິດເຊີແລນ (SDC)

# ຄໍານໍາ

ການພັດທະນາພື້ນຖານໂຄງລ່າງເປັນບູລິມະສິດຫລັກຂອງລັດຖະບານ. ເພື່ອປັບປຸງ ແລະ ຟື້ນຟູຊີວິດການເປັນຢູ່ຂອງປວງຊົນລາວທັງຊາດໃຫ້ດີຂຶ້ນເທື່ອລະກ້າວ. ເມືອງຫີນເຫີບເປັນເມືອງໜຶ່ງໃນບັນດາເມືອງທີ່ຂຶ້ນກັບແຂວງວຽງຈັນ ແລະ ຕັ້ງຢູ່ເຂດຈຸດຍຸດທະສາດ ເຂດພູມສັນຖານທີ່ເປັນເຄິ່ງພູ ແລະ ທົ່ງພຽງ. ມີເຂດແດນຕິດກັບຫລາຍເມືອງ ແລະ ເປັນຈຸດທີ່ຕັ້ງຂອງຂົວຫີນເຫີບ ຊຶ່ງເປັນຂົວເຊື່ອມຕໍ່ບັນດາແຂວງພາກກາງພາກໃຕ້ ແລະ ບັນດາແຂວງພາກເໜືອ ທັງນອນຢູ່ໃນເສັ້ນທາງຍຸດທະສາດ, ເສັ້ນທາງຫລວງແຫ່ງຊາດເລກທີ 13 ເໜືອ.

ເມື່ອເສດຖະກິດມີການຂະຫຍາຍຕົວ, ການຄົມມະນາຄົມການສັນຈອນເກີດຄວາມຫຍຸ້ງຍາກ ແອອັດເສັ້ນທາງ, ຂົວຫລາຍແຫ່ງຈໍາຕ້ອງໄດ້ຮັບການກໍ່ສ້າງຂະຫຍາຍ ແລະ ສ້ອມແປງເພື່ອຮັບປະກັນຄວາມສະດວກສະບາຍໃຫ້ແກ່ການຄົມມະນາຄົມຂົນສົ່ງທາງບົກ.

ຂົວຫີນເຫີບຈຶ່ງເປັນຈຸດໜຶ່ງທີ່ນອນຢູ່ໃນແຜນພັດທະນາ ແລະ ຢູ່ໃນເປົ້າໝາຍຂອງການກໍ່ສ້າງເພື່ອຮອງຮັບການບັນທຸກກົນຈັກໜັກ ແລະ ການຈໍລະຈອນສິນຄ້າພາຍໃນໄປສູ່ປະເທດທີສາມ. ລັດຖະບານໄດ້ເລັງເຫັນຈຸດສໍາຄັນ ແລະ ຄວາມຈໍາເປັນຈະຕ້ອງກໍ່ສ້າງໃໝ່. ໂດຍລວມແລ້ວຊຸມຊົນພາຍໃນເມືອງຫີນເຫີບເອງກໍມີການຂະຫຍາຍຕົວ, ການສັນຈອນໃນການຂ້າມຜ່ານຂົວດັ່ງກ່າວ, ບາງຄັ້ງກໍເກີດບັນຫາ ເພາະຂົວດັ່ງກ່າວເປັນຂົວທີ່ນ້ອຍ ແລະ ຍາວເວລາຂ້າມດ້ວຍລົດຈັກກໍມີລົດໃຫຍ່ເຂົ້າມາອີກດ້ານໜຶ່ງ ຊຶ່ງເປັນສາເຫດເຮັດໃຫ້ເກີດອຸບັດຕິເຫດ.

ປະຊາຊົນຈໍານວນ 9 ຫລັງຄາເຮືອນທີ່ດໍາລົງຊີວິດຢູ່ຈຸດທີ່ຕັ້ງຂົວແຫ່ງໃໝ່. ເມື່ອກ່ອນແມ່ນໃຊ້ຊີວິດຄືກັນກັບປະຊາຊົນຊາວຊົນນະບົດທົ່ວໄປຊຶ່ງມີອາຊີບເຮັດນາ, ເຮັດສວນ ແລະ ຫາປາຕາມແມ່ນໍ້າລີກດໍາລົງຊີວິດຢູ່ແບບຫາເຊົ້າກິນຄໍ່າຕາມວິຖີຊີວິດຂອງຊາວຊົນນະບົດ. ພາຍຫລັງທີ່ໄດ້ຮັບການຊົດເຊີຍທີ່ດິນ ແລະ ເຮືອນແລ້ວ ຈໍານວນຄອບຄົວທີ່ໄດ້ຮັບຜົນກະທົບໄດ້ມີຊີວິດໃໝ່ທີ່ດີຂຶ້ນກວ່າເດີມ, ຍ້ອນວ່າ ວິຖີຊີວິດ ປັດຈຸບັນໄດ້ປ່ຽນໄປຈາກເດີມທີ່ເຄີຍເປັນມາ. ພາຍຫລັງໄດ້ຮັບກ້ອນທຶນເປັນຄ່າຊົດເຊີຍທີ່ດິນເຂົາເຈົ້າໄດ້ ສ້າງເຮືອນຫລັງໃໝ່ທີ່ໄດ້ມາດຖານກວ່າເດີມ ແລະ ຍັງມີເງິນເຫລືອໄວ້ຕື່ມອີກ.

ປະຊາຊົນໃນ 9 ຫລັງຄາເຮືອນໄດ້ມີຊີວິດທີ່ດີຂຶ້ນ. ເນື່ອງຈາກໄດ້ຮັບການຊົດເຊີຍທີ່ດິນ ແລະ ສິ່ງປຸກສ້າງ, ຜົນລະປູກເຕັມສ່ວນສົມເຫດສົມຜົນ. ນອກນັ້ນເຂົາເຈົ້າຍັງມີສິດໃນການທັບມ້າງເອົາວັດຖຸ ແລະ ສິ່ງປຸກສ້າງຂອງເຂົາເຈົ້າເທົ່າທີ່ສາມາດເອົາໄດ້. ສ່ວນທີ່ເປັນວັດສະດຸໄມ້ ແລະ ເຄື່ອງມຸງຫລັງຄາຍັງສາມາດເອົາໄປນໍາໃຊ້ປະກອບໃນການປຸກສ້າງເຮືອນຫລັງໃໝ່ໄດ້, ພ້ອມດ້ວຍກ້ອນທຶນທີ່ໄດ້ຮັບຈາກການຊົດເຊີຍກໍຄືປະຊາຊົນຊາວຊົນນະບົດທົ່ວໄປທີ່ມີດິນດອນຕອນຫຍ້າຫລາຍຕອນສໍາຮອງ. ສະນັ້ນ, ກ້ອນທຶນທີ່ໄດ້ຮັບຈາກການຊົດເຊີຍບາງຄອບຄົວກໍມີທຶນຄ້າຂາຍ, ຊື້ສັດລ້ຽງ, ຊື້ລົດໄຖນາເພື່ອສ້າງເສດຖະກິດຄອບຄົວດີຂຶ້ນລື່ນເກົ່າ.

ຈຸດປະສົງຂອງກໍລະນີສຶກສານີ້ເພື່ອສຶກສາສະພາບຊີວິດການເປັນຢູ່ຂອງປະຊາຊົນ 9 ຫລັງຄາເຮືອນມີການເປັນຢູ່ທີ່ດີຂຶ້ນ, ພາຍຫລັງໄດ້ຮັບການຊົດເຊີຍຈາກໂຄງການກໍ່ສ້າງຂົວຫີນເຫີບແຫ່ງໃໝ່.

# ສາລະບານ


| | |
|---|---|
| ຄຳນຳ | I |
| ສາລະບານ | III |
| ຄວາມເປັນມາ. | 1 |
| ເຫດການທີ່ເກີດຂຶ້ນ. | 1 |
| ກົດໝາຍທີ່ກ່ຽວຂ້ອງ. | 3 |
| ປະເດັນບັນຫາ. | 3 |
| ການແກ້ໄຂບັນຫາຂອງໜ່ວຍງານພາກລັດ. | 3 |
| ການຊົດເຊີຍ. | 5 |
| ວິເຄາະບັນຫາ. | 5 |
| ສະຫລຸບ. | 5 |
| ຂໍ້ສະເໜີ. | 6 |
| ຄຳຖາມ. | 6 |
| ແຫລ່ງຂໍ້ມູນ. | 6 |

# 1. ຄວາມເປັນມາ.

ຂົວຫີນເທີບເປັນຂົວເກົ່າແກ່ທີ່ນຳໃຊ້ມາເປັນເວລາດົນນານຫລາຍ 10 ປີມາແລ້ວ, ນັບຕັ້ງແຕ່ສະໄໝຕໍ່ສູ້ກູ້ຊາດຈົດຮອດປັດຈຸບັນ. ຂົວນີ້ແຄບເກີນໄປ ແລະ ມີຄວາມຈຳກັດໃນການຮັບນ້ຳໜັກ ສະນັ້ນຈຶ່ງເກີດມີການເປ່ເພ ແລະ ຊຳລຸດ.

ໃນໄລຍະທ້າຍປີ 2007 ລັດຖະບານໄດ້ອະນຸມັດ ແລະ ຮັບຮອງໃຫ້ດຳເນີນໂຄງການກໍ່ສ້າງຂົວ ແຫ່ງດັ່ງກ່າວ ໂດຍໄດ້ຮັບທຶນຊ່ວຍເຫລືອລ້າຈາກປະເທດຍີ່ປຸ່ນ ແລະ ບໍລິສັດກໍ່ສ້າງຂົວທາງເລກ 8 ເປັນຜູ້ຮັບເໝົາກໍ່ສ້າງ. ຊຶ່ງຂອບເຂດຂອງການດຳເນີນການແມ່ນ 2 ປີໃຫ້ສຳເລັດ. ໄລຍະການກໍ່ສ້າງໃຊ້ເວລາ 2 ປີຄືແຕ່ປີ 2008 – 2010 ແມ່ນໃຫ້ສຳເລັດຮ້ອຍສ່ວນຮ້ອຍ.

ພາຍຫລັງທີ່ບໍລິສັດກໍ່ສ້າງຂົວທາງເລກ 8 ເປັນຜູ້ສຳປະທານຮັບເໝົາກໍ່ສ້າງຈາກລັດຖະບານແຫ່ງ ສ.ປ.ປ ລາວແລ້ວ ໃນຊ່ວງ 3-4 ເດືອນຂອງທ້າຍປີ 2007 ໄດ້ເລີ່ມລົງມືດຳເນີນການສຳຫລວດພື້ນທີ່ພ້ອມເກັບຂໍ້ມູນເສດຖະກິດສັງຄົມຢູ່ຈຸດທີ່ຕັ້ງຂົວແຫ່ງໃໝ່. ເມື່ອເບິ່ງຄວາມເປັນໄປໄດ້ຂອງຄວາມເໝາະສົມ ແລະ ບໍ່ສ້າງຜົນກະທົບໃຫ້ກັບຊຸມຊົນຫລາຍ, ມີພຽງ 9 ຄອບຄົວ. ຖ້າທຽບໃສ່ບ່ອນທີ່ຈະກໍ່ສ້າງຢູ່ຈຸດທີ່ຕັ້ງຂົວແຫ່ງເກົ່າເຫັນວ່າມີຜົນກະທົບຫລາຍກວ່າ 20 ຄອບຄົວ.

- ຜ່ານການສຳຫລວດຂອງວິສະວະກອນຂົວທາງໄດ້ເວົ້າວ່າ ເພື່ອຮັບປະກັນການສັນຈອນ ແລະ ຫລີກລ້ຽງຜົນກະທົບຕໍ່ຊຸມຊົນເທົ່າທີ່ຈະເຮັດໄດ້ ເຫັນວ່າ ຈຸດຂົວແຫ່ງເກົ່າແມ່ນບໍ່ເໝາະສົມຍ້ອນວ່າ.
    - ເປັນເຂດທີ່ຊຸມຊົນໜາແໜ້ນ ມີຜົນກະທົບຫລາຍ.
    - ສູນເສຍງົບປະມານຫລາຍໃນການສ້າງເສັ້ນທາງເວັ້ນໃໝ່ ເພື່ອການສັນຈອນໄປມາ.
    - ເສຍເວລາໃນການທັບມ້າງຈຸດຂົວເກົ່າ ອາດຈະເຮັດໃຫ້ການກໍ່ສ້າງບໍ່ສຳເລັດຕາມກຳນົດໝາຍ.

# 2. ເຫດການທີ່ເກີດຂຶ້ນ.

ປະຊາຊົນທີ່ດຳລົງຊີວິດຕັ້ງພູມລຳເນົາ ແລະ ປຸກສ້າງທີ່ຢູ່ອາໄສຢູ່ລຽບຕາມແຄມແມ່ນ້ຳລຶກ 9 ຫລັງຄາເຮືອນໄດ້ຍົກຍ້າຍອອກຈາກພື້ນທີ່ການກໍ່ສ້າງໃຫ້ສຳເລັດກ່ອນການລົງມືດຳເນີນການກໍ່ສ້າງຂົວແຫ່ງໃໝ່ໃນຕົ້ນປີ 2008. ພຽງໄລຍະ 2-3 ເດືອນ ປະຊາຊົນຕ້ອງສຳເລັດການຍົກຍ້າຍ. ສິ່ງວັດຖຸໃດທີ່ສາມາດມ້າງເອົາໄດ້ກໍໃຫ້ມ້າງເອົາເທົ່າທີ່ມີປະໂຫຍດເພື່ອໄປສ້າງເຮືອນຫລັງໃໝ່, ໝາຍຄວາມວ່າ ກຳມະສິດທີ່ດິນທີ່ເຄີຍເປັນຂອງບຸກຄົນໄດ້ກາຍເປັນຂອງສາທາລະນະນຳໃຊ້ຮ່ວມກັນ. ສ່ວນການຊົດເຊີຍໃຫ້ແກ່ຜູ້ທີ່ເຄີຍຖືກຳມະສິດໃນທີ່ດິນດັ່ງກ່າວນັ້ນໄດ້ຮັບການຊຳລະເປັນງວດໆໄປ.

ໜ່ວຍງານພາກລັດໄດ້ຈັດຕັ້ງຂຶ້ນສະເພາະການອຳນວຍຄວາມສະດວກໃຫ້ທັງສອງຝ່າຍໄດ້ລົງສຳຫລວດເກັບກຳຂໍ້ມູນ ແລະ ປະເມີນມູນຄ່າລາຄາທີ່ດິນ ແລະ ສິ່ງປຸກສ້າງສະເພາະ. ລາຄາທີ່ດິນແມ່ນໄດ້ເປັນເອກະພາບກັນໃນລາຄາ 65.000 ກີບຕໍ່ຕາແມັດ, ສ່ວນສິ່ງປຸກສ້າງແມ່ນປະເມີນຕາມວັດສະດຸກໍ່ສ້າງ.

ເຖິງວ່າປະຊາຊົນຈະໄດ້ຮັບຄ່າຊົດເຊີຍ. ແຕ່ວ່າ ເຂົາເຈົ້າກໍຍັງມີຄວາມຜູກພັນກັບທີ່ຢູ່ອາໄສ ແລະ ພືດພັນຜົນລະປູກຕ່າງໆຢູ່ໃນສວນຕະຫລອດເຖິງແຫລ່ງນ້ຳທຳມະຊາດທີ່ເຄີຍອຳນວຍຄວາມສະດວກແກ່


ພື້ນທີ່ກໍລະນີສຶກສາ
ບ້ານຫີນເຫີບ, ເມືອງຫີນເຫີບ, ແຂວງວຽງຈັນ,
ມ.ຫີນເຫີບ
ບ້ານຫີນເຫີບ

ການດຳລົງຊີວິດ.

ຫົວໜ້າຄອບຄົວໜຶ່ງໃນຈຳນວນ 9 ຄອບຄົວເວົ້າວ່າ "ຊາໃຈຕົນເອງກໍບໍ່ຢາກຍ້າຍໄປບ່ອນອື່ນ ເພາະວ່າ ຢູ່ບ່ອນນີ້ກໍຫລາຍຟ້າຫລາຍປີແລ້ວເຄື່ອງປູກຂອງຝັງກໍໄດ້ຢູ່ໄດ້ກິນຕະຫລອດມາ. ແຕ່ເນື່ອງຈາກວ່າ ພວກເຮົາເຫັນແກ່ປະໂຫຍດສ່ວນລວມ ແລະ ເພື່ອເປັນການພັດທະນາທາງດ້ານຄົມມະນາຄົມໃຫ້ມີຄວາມສະດວກສະບາຍ, ພວກເຮົາຈຶ່ງໄດ້ຕົກລົງຍອມເສຍສະຫລະຍົກຍ້າຍອອກຈາກພື້ນທີ່ດັ່ງກ່າວ".

# 3. ກົດໝາຍທີ່ກ່ຽວຂ້ອງ.

- ກົດໝາຍວ່າດ້ວຍທີ່ດິນ.
- ກົດໝາຍທາງຫລວງ.

# 4. ປະເດັນບັນຫາ.

- ຂົວແຄບ, ຮັບນ້ຳໜັກໄດ້ຈຳກັດ.
- ຂົວເກົ່າຖືກໃຊ້ງານໄດ້ຫລາຍ 10 ປີ ເກີດມີການເປ່ເພ.
- ຈຸດທີ່ສ້າງຂົວແຫ່ງໃໝ່ມີຜົນກະທົບໜ້ອຍກວ່າຈຸດຂົວເກົ່າ.
- ຕັດເສັ້ນທາງໃຫ້ສັ້ນລົງ, ເວັ້ນຈາກການແອອັດຂອງຊຸມຊົນ.

# 5. ການແກ້ໄຂບັນຫາຂອງໜ່ວຍງານພາກລັດ.

ອົງການຈັດຕັ້ງລັດຂັ້ນແຂວງ,ເມືອງ ແລະ ການຈັດຕັ້ງບ້ານ ສົມທົບກັບໂຄງການກໍ່ສ້າງໄດ້ມາ ຢືນຢັນ, ຮັບຮອງຕໍ່ໜ້າປະຊາຊົນຜູ້ໄດ້ຮັບຜົນກະທົບວ່າ ຍິນດີຈະຊົດເຊີຍຜົນເສຍຫາຍຕາມຄວາມເໝາະສົມ.

ຈັດຕັ້ງທີມງານໜ່ວຍງານສະເພາະທີ່ເຮັດວຽກໂດຍກົງກ່ຽວກັບການຊົດເຊີຍ ແລະ ອຳນວຍຄວາມສະດວກໃຫ້ການດຳເນີນໂຄງການໃຫ້ສຳເລັດຕາມແຜນການໃນປີ 2010.

ໜ່ວຍງານສະເພາະໄດ້ລົງເກັບກຳຂໍ້ມູນ. ເພື່ອເກັບຂໍ້ມູນລາຍລະອຽດຕ່າງໆຂອງດິນ, ສິ່ງປຸກສ້າງ, ຜົນລະປູກຕ່າງໆ ເພື່ອມາຕີເປັນມູນຄ່າປະເມີນຕາມລາຄາຕົວຈິງຂອງທ້ອງຖິ່ນ ແລະ ວັດສະດຸກໍ່ສ້າງຂອງແຕ່ລະຫລັງຄາເຮືອນ.

ຄະນະທີມງານຊຶ່ງປະກອບດ້ວຍຜູ້ຕາງໜ້າກົມແຜນການ ແລະ ການລົງທຶນ, ຕາງໜ້າຫ້ອງການໂຍທາທິການແຂວງ, ຫ້ອງວ່າການເມືອງ, ທີ່ດິນເມືອງ, ກະສິກຳເມືອງແລະຍຸດຕິທຳໄດ້ເປີດກອງປະຊຸມ ເພື່ອຮັບຟັງຂໍ້ຄິດເຫັນຂອງຄອບຄົວທີ່ໄດ້ຮັບຜົນກະທົບວ່າ ເມື່ອຖືກຍ້າຍເຮືອນຈະເຮັດແນວໃດ? ຈະໃຫ້ທາງໂຄງການກໍ່ສ້າງຊ່ວຍຫຍັງ? ຈະໃຫ້ຊື້ດິນຕອນໃໝ່ແທນ ແລະ ຈະຊ່ວຍຍ້າຍທີ່ຢູ່ອາໄສໃຫ້ບໍ່?


ETL



# 6. ການຊົດເຊີຍ.

ພາຍຫລັງຄະນະກຳມະການພາກລັດໄດ້ປະເມີນມູນຄ່າທີ່ດິນ, ສິ່ງປຸກສ້າງສຳເລັດເປັນທີ່ຮຽບຮ້ອຍແລ້ວໂດຍເອກະພາບກັບຄວາມເໝາະສົມອີງໃສ່ທ້ອງຖິ່ນ. ທຸກຄອບຄົວໄດ້ຮັບການຊົດເຊີຍແບ່ງອອກເປັນ 3 ງວດ, ເລີ່ມຕົ້ນດ້ວຍການທົດແທນທີ່ດິນປຸກສ້າງ, ຕໍ່ມາແມ່ນປະເມີນມູນຄ່າສິ່ງປຸກສ້າງ, ສິ່ງສຸດທ້າຍແມ່ນພືດພັນຜົນລະປູກຢູ່ໃນສວນ. ການຊົດເຊີຍທັງໝົດໄດ້ຮັບການປະຕິບັດພາຍໃນໄລຍະ 1 ເດືອນກັບ 15 ວັນ.

ການຊົດເຊີຍມູນຄ່າທີ່ດິນ ແລະ ສິ່ງປຸກສ້າງນັ້ນຈ່າຍເປັນເງິນກີບສຳລັບທີ່ດິນມູນຄ່າ 65.000 ຕໍ່ຕາແມັດ, ສ່ວນສິ່ງປຸກສ້າງແມ່ນອີງໃສ່ວັດສະດຸຕົວຈິງຂອງສິ່ງປຸກສ້າງຂອງແຕ່ລະຫລັງຄາເຮືອນ.

ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງຂົວນັ້ນ, ພາຍຫລັງທີ່ໄດ້ຮັບການຊົດເຊີຍທັງໝົດແລ້ວຈຶ່ງທັບມ້າງເຮືອນຂອງຕົນອອກໃຫ້ແລ້ວກ່ອນໂຄງການຈະລົງມືດຳເນີນການກໍ່ສ້າງຕາມຂໍ້ຕົກລົງ. ການຊົດເຊີຍ ຫຼື ການທົດແທນຄ່າເສຍຫາຍແມ່ນອີງຕາມດຳລັດ 192/ນຍ, ລົງວັນທີ 7/7/2005.

<u>ມາດຕາ6</u> ວ່າດ້ວຍຫຼັກການທົດແທນຄ່າເສຍຫາຍ.

# 7. ວິເຄາະບັນຫາ.

- ທຶນຊ່ວຍເຫລືອລ້າຈາກລັດຖະບານຍີ່ປຸ່ນແມ່ນສະໜອງໄດ້ທຸກເງື່ອນໄຂ ແລະ ຜົນກະທົບໄດ້ຮັບການຊົດເຊີຍຕາມຄວາມເໝາະສົມ.
- ບໍລິສັດກໍ່ສ້າງຂົວທາງເລກ 8 ຈຳກັດ ມີແຜນການ ແລະ ສຶກສາຂໍ້ມູນລະອຽດ ບໍ່ວ່າ ຂໍ້ມູນເສດຖະກິດສັງຄົມ ແລະ ດຳເນີນເປັນຂັ້ນຕອນລະອຽດ.
- ຂອດການປະສານງານ ທຸກຝ່າຍໄດ້ໃຫ້ຄວາມຮ່ວມມືກັນເປັນຢ່າງດີ.
- ເປັນໂຄງການທີ່ສ້າງຜົນກະທົບຕໍ່ກັບຊຸມຊົນພຽງສ່ວນໜ້ອຍ, ແຕ່ໄດ້ຮັບຜົນປະໂຫຍດຫລາຍ. ຊາວຫີນເຫີບເອງກຸ່ມຄົນທົ່ວໄປທີ່ສັນຈອນໄປມາ ໂດຍສະເພາະຄອບຄົວຈຳນວນ 9 ຫລັງຄາເຮືອນມີຊີວິດການເປັນຢູ່ທີ່ດີຂຶ້ນ.

# 8. ສະຫລຸບ.

ໂຄງການກໍ່ສ້າງຂົວແຫ່ງໃໝ່ໄດ້ເຮັດໃຫ້ຊາວເມືອງຫີນເຫີບມີຄວາມສະດວກສະບາຍຫລາຍຂຶ້ນໃນການຄົມມະນາຄົມສັນຈອນໄປມາຫາສູ່ກັນ, ພາຍຫລັງຂົວແຫ່ງໃໝ່ກໍ່ສ້າງສຳເລັດ. ຄອບຄົວທີ່ຖືກຍົກຍ້າຍນັ້ນມີຊີວິດທີ່ດີຂຶ້ນກວ່າແຕ່ເກົ່າ, ກ່ອນທີ່ ມີການກໍ່ສ້າງຂົວ. ຈາກອາຊີບທີ່ເຄີຍຫາເຊົ້າກິນຄ່ຳ, ປັດຈຸບັນຄອບຄົວເຫລົ່ານີ້ໄດ້ກາຍມາເປັນພໍ່ຄ້າຊາວຂາຍທີ່ມີຊີວິດການເປັນຢູ່ໝັ້ນຄົງ.

ການຈັດຕັ້ງທີ່ກ່ຽວຂ້ອງຈາກພາກລັດ ແລະ ການຈັດຕັ້ງບ້ານໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ

ວຽກງານເປັນຢ່າງດີ. ການປະສານງານກັບທຸກພາກສ່ວນກ່ຽວຂ້ອງມີຄວາມສະດວກດີ.

# 9. ຂໍ້ສະເໜີ.

- ຄວນສຶກສາຂໍ້ມູນໂດຍຖີ່ຖ້ວນກ່ອນຈະຮັບເອົາການຊ່ວຍເຫລືອຈາກໂຄງການຊ່ວຍເຫລືອລ້າ ຈາກຕ່າງປະເທດ.
- ຄວນສຶກສາເບິ່ງຄວາມໄດ້ປຽບ, ເສຍປຽບຂອງພື້ນທີ່ການກໍ່ສ້າງໃຫ້ດີທີ່ສຸດ. ແລ້ວຈຶ່ງດຳເນີນການກໍ່ສ້າງເພື່ອປະໂຫຍດສ່ວນລວມ.
- ໜ່ວຍງານທີ່ກ່ຽວຂ້ອງທັງພາກລັດຄວນສຶກສາເອົາແບບແຜນວິທີເຮັດວຽກຂອງເມືອງຫີນເຫີບ.
- ສະເໜີໃຫ້ບັນດາທ່ານຜູ້ອ່ານສຶກສາກໍລະນີສຶກສາຈາກຄົນອື່ນໆ ເພື່ອຊ່ວຍປະກອບຄຳຄິດຄຳ ເຫັນ ຫລື ເພີ່ມເຕີມຂໍ້ມູນທີ່ເຫັນວ່າຄວນຈະມີ ຫລື ຈຳເປັນຕ້ອງເພີ່ມເຕີມ.

# 10. ຄຳຖາມ.

1. ຖ້າດິນ ແລະ ເຮືອນຂອງທ່ານໄດ້ຮັບຜົນກະທົບຈາກໂຄງການພັດທະນາ, ແຕ່ຖ້າຫາກບໍ່ໂຊກດີຄືກັບ 9 ຫລັງຄາເຮືອນນີ້ ທ່ານຄິດວ່າຈະເຮັດແນວໃດ?
2. ຖ້າຫາກວ່າ ພະນັກງານລັດທີ່ກ່ຽວຂ້ອງບໍ່ມີສ່ວນຊ່ວຍໃນການຊົດເຊີຍຈະເກີດຫຍັງຂຶ້ນ?
3. ທ່ານຄິດວ່າ ການຕັດສິນໃຈດັ່ງກ່າວມີຄວາມເໝາະສົມຫລືບໍ່ ໃນການຍອມຊົດເຊີຍຜົນເສຍຫາຍໃຫ້ 9 ຫລັງຄາເຮືອນກັບການສ້າງຂົວແຫ່ງໃໝ່?

# 11. ແຫລ່ງຂໍ້ມູນ.

- ຫ້ອງການທີ່ກ່ຽວຂ້ອງເມືອງຫີນເຫີບ.
- ອົງການຄຸ້ມຄອງທີ່ດິນປະຈຳເມືອງຫີນເຫີບ.
- ນາຍບ້ານ (ອຳນາດການປົກຄອງບ້ານ).
- ປະຊາຊົນຄອບຄົວທີ່ໄດ້ຮັບຜົນກະທົບ.

# ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

## *ເປົ້າໝາຍຂອງໂຄງການ.*

ເສີມສ້າງການບໍລິຫານ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນລາວ ໃຫ້ຍືນຍົງ ໂດຍ ການ ປັບປຸງການເຂົ້າເຖິງຂໍ້ມູນຂ່າວສານ, ປັບປຸງການມີສ່ວນຮ່ວມ ແລະ ປັບປຸງຄວາມສາມາດຂອງຄູ່ຮ່ວມງານຫຼັກ.

## *ຈຸດປະສົງຂອງໂຄງການ.*

ເພື່ອສົ່ງເສີມທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຮັບຮູ້, ຄວາມສາມາດ ແລະ ມີສ່ວນຮ່ວມໃນການປຶກສາ ຫາລື ກ່ຽວກັບຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂົ້າ ໃຈໄດ້ ກ່ຽວກັບສິດໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

## *ໂຄງການດຳເນີນງານໂດຍອີງຕາມຫຼັກການດັ່ງຕໍ່ລົງໄປນີ້.*

- ຄວາມເປັນເຈົ້າການຂອງຄົນລາວ.
- ການຍອມຮັບຂໍ້ຕົກລົງວ່າດ້ວຍບົດບາດຍິງ-ຊາຍ ກ່ຽວກັບປະເດັນທີ່ດິນ.
- ການຍອມຮັບຂໍ້ຕົກລົງວ່າດ້ວຍຄວາມເປັນຊົນຊາດຊົນເຜົ່າ ແລະ ປະເພນີ ວັດທະນະທຳທ້ອງຖິ່ນ.
- ຄວາມເປັນກາງ.
- ການເຂົ້າເຖິງຂໍ້ມູນຂ່າວສານຢ່າງເປີດກວ້າງ.
- ເຮັດໃຫ້ມີຄວາມຫຼາກຫຼາຍ.
- ການມີສ່ວນຮ່ວມ.

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ
ອົງການບ້ານຈຸດສຸມສາກົນ
ຕູ້ ປ.ນ. 4697
ນະຄອນຫຼວງວຽງຈັນ, ສປປ ລາວ

ອີແມວ: info@rightslinklao.org
www.rightslinklao.org